# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 10 ມົກຣາ 2009 (1-10-2010)

---

## <u>ການປໍ້າກຸມກັບເວລາ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ປັນຍາຈານ 3:1-14)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ພວກເຮົາຖືກສ້າງຂຶ້ນໃຫ້ຢູ່ໃຕ້ເວລາ, ແຕ່ວ່າ, ພຣະເຈົ້າເປັນຜູ້ຄວບຄຸມ**ບັນ**ຊາເວລາ. ພຣະອົງເທົ່ານັ້ນ ທີ່ສາມາດເຫັນເວລາຈາກຈຸດເລີ້ມຕົ້ນຈົນເຖິງຈຸດຈົບ ພວກເຮົາຕ້ອງຢືນຢູ່ໃນຣັສມີຂອງພຣະອົງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ເວລາເປັນສິນຄ້າ ທີ່ມີຄ່າສູງ- ບາງຄັ້ງພວກເຮົາພຍາຍາມບັງຄັບບັນຊາເວລາ, ແຕ່ກໍມີຫລາຍຄັ້ງເວລາໄດ້ບັງຄັບພວກເຮົາ. ພວກເຮົາບໍ່ເປັນພຽງແຕ່ຜູ້ເກັບຮັກສາເວລາ, ພວກເຮົາເປັນຜູ້ເກັບທ້ອນເວລາ, ເປັນຂ້າທາດວຽກງານທີ່ເຕັມໃນຕາຕະລາງ. ປົກກະຕິແລ້ວພວກເຮົາບໍ່ມີເວລາພໍ. ພວກເຮົາຕ້ອງຈື່ໄວ້ວ່າ ເວລາບໍ່ໄດ້ກະທົບສະເທືອນຫຍັງຕໍ່ພຣະເຈົ້າ. ເມື່ອສິ່ງໃດສິ່ງນຶ່ງບໍ່ເປັນໄປຕາມເວລາທີ່ພວກເຮົາຄາດເອົາໄວ້, ພວກເຮົາກໍຕ້ອງເຂົ້າໃຈວ່າເວລາທີ່ພຣະເຈົ້າວາງແຜນ ແລະຈັດຕັ້ງເອົາໄວ້ນັ້ນມັນດີທີ່ສຸດຢູ່ແລ້ວ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**
ບົດຮຽນນີ້ຈະຊ່ອຍທ່ານໃຫ້ຮູ້ຄຸນຄ່າຂອງເວລາ ວ່າເປັນຂອງຂວັນມາຈາກພຣະເຈົ້າ ແລະໃຫ້ຕັດສິນໃຈເບິ່ງໄປໄກໆເບິ່ງການຊ່ອຍເຫລືອຂອງພຣະເຈົ້າໃນເວລາອັນຖືກຕ້ອງທ່ຽງທັມສຳລັບການກະທຳທີ່ຖືກຕ້ອງ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**
1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ບົດຮຽນໃນອາທິດນີ້ຈະຊີ້ໃຫ້ເຫັນເຖິງການຕໍ່ສູ້ກັບເວລາ, ຊຶ່ງໂມງຂໍ່ແຂນ, ໂມງໃຫຍ່, ປະຕິທິນ, ແລະເວລານັດໝາຍຕ່າງໆ ໄດ້ເຮັດໃຫ້ຄົນແລ່ນໄປຕາມທາງຂອງມັນຢ່າງອັດຕະໂນມັດ.

- ຣະບົບແບບແຜນການດຳເນີນງານທີ່ພວກເຮົາຕັ້ງຄາດໝາຍໄວ້ເພື່ອໃຫ້ດຳເນີນໄປຢ່າງເປັນຣະບຽບ ແລະຜົນພອຍໄດ້ຂອງພວກເຮົາເປັນກົງກັນຂ້າມເລີຍ ແລະມັນກາຍມາຄວບຄຸມພວກເຮົາໄດ້ຢ່າງໃດ?
- ພວກເຮົາເຫັນສັງຄົມຂອງພວກເຮົາຮັບໃຊ້ເວລາແທນທີ່ຈະໃຫ້ເວລາເປັນການຮັບໃຊ້ຂອງງພວກເຮົາແນວໃດ?

- ໂມງມຸ້ງໜ້າເດີນໄປເລື້ອຍໆ ແລະປະຕິທິນກໍເປີດໜ້າຕໍ່ໄປປະຈໍາທຸກວັນ ພວກເຮົາບໍ່ໄດ້ຄວບຄຸມເວລານັ້ນ, ແຕ່ແມ່ນພຣະເຈົ້າຕ່າງຫາກທີ່ຄວບຄຸມເວລາ. ພວກເຮົາຕ້ອງເຂົ້າໃຈນັ້ນເວລາແມ່ນຂອງພຣະເຈົ້າ ພຣະເຈົ້າເປັນຜູ້ວາງແຜນການຕາມພຣະປະສົງຂອງພຣະອົງຊຶ່ງດີຢູ່ຕລອດການ.

1. <u>**ການຢູ່ໃນເວລາ**:</u> (ປັນຍາຈານ 3:1-8)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 3:1-8
- ໃຫ້ນັກຮຽນຄິດເຖິງຄວາມແຕກຕ່າງຂອງໜັງ ຫລືທີວີໄຊທີ່ຕັ້ງໃສ່ບົນພື້ນຖານຂອງເວລາ. ໃຫ້ນັກຮຽນອາສາສມັກແບ່ງປັນເຣື່ອງ ຫລືສິ່ງຕ່າງໆທີ່ເຂົາເຈົ້າມັກຫລາຍທີ່ສຸດໃນໜັງເຣື່ອງນັ້ນ. ແລ້ວໄປຖາມຜູ້ເຖົ້າວ່າມີສິ່ງໃດແດ່ທີ່ເຂົາເຈົ້າສາມາດເຮັດກະໂດດຂ້າມຜ່ານເວລາທີ່ແຕກຕ່າງກັນ ແລະເວລານັ້ນໄດ້ໝູນວຽນກັບມາຫາເວລາເດີມ.
- ເວລາໃດ, ບ່ອນໃດທີ່ທ່ານໄດ້ເລືອກ? ແມ່ນຫຍັງທີ່ທ່ານຈະເຮັດໃຫ້ມີຄວາມແຕກຕ່າງ? ທ່ານມີຄວາມຕ້ອງການໃຫ້ຊີວິດຂອງທ່ານ ຫລືການດໍາຣົງຊີວິດຂອງທ່ານມີຄວາມແຕກຕ່າງໄດ້ຢ່າງໃດ?
- ໂດຍສາກົນນະໂລກອັນນີ້, ລ້ວນແລ້ວແຕ່ມາຈາກພຣະເຈົ້າ, ພຣະເຈົ້າເປັນຜູ້ໃຫ້ທຸກສິ່ງເກີດຂຶ້ນມາ ແລະກໍແມ່ນພຣະອົງເປັນຜູ້ກໍານົດເວລາຈຸດຈົບ ແລະໃນທຸກສິ່ງກໍຢູ່ໃນລະຫວ່າງນີ້. ເຖິງແມ່ນວ່າສິ່ງເຫລົ່ານີ້ເບິ່ງແລ້ວມັນບໍ່ໄດ້ເກີດຂຶ້ນກັບພວກເຮົາຕອນນີ້, ພວກເຮົາຈໍາເປັນຕ້ອງເຂົ້າໃຈວ່າເວລາຂອງພຣະເຈົ້າເປັນເວລາທີ່ດີທີ່ສຸດສໍາລັບພວກເຮົາແລະສໍາລັບທຸກສິ່ງ.
- ອັນໃດເປັນບັນຫາທີ່ຍາກທີ່ສຸດ ແລະໄດ້ສະແດງອອກໃນການທໍາງານໃຫ້ສໍາເຣັດຕາມແຜນການແລະຕາມຈຸດປະສົງໃນຊີວິດຂອງທ່ານ?

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ**:</u> (ປັນຍາຈານ 3:1-8)

1. ເປັນດ້ວຍເຫດໃດຈຶ່ງມີເວລາສໍາລັບກິຈກັມທຸກສິ່ງພ້ອມທັງ ຄວາມຫຍຸ້ງຍາກສັບສົນ ແລະເຫດການຕ່າງໆຢູ່ພາຍໃຕ້ສວັນ?
2. ພວກເຮົາຈະຮູ້ໄດ້ຢ່າງໃດວ່າ "ເປັນເວລາທີ່ຖືກຕ້ອງ" ສໍາລັບກິຈກັມອັນສໍາຄັນ? ໃນທາງໃດທີ່ພວກເຮົາສາມາດຊອກສແວງຫາ ແລະຕິດຕາມເວລາຂອງພຣະເຈົ້າ?
3. ເປັນຫຍັງບາງເທື່ອພວກເຮົາຈຶ່ງທໍາງານຕໍ່ສູ້ພຣະເຈົ້າ ແລະເວລາຂອງພຣະອົງ?
4. ພຣະເຈົ້າໄດ້ຊົງທໍາບາງສິ່ງບາງຢ່າງໃນຊີວິຂອງທ່ານຕາມເວລາອັນເໝາະສົມນັ້ນມີທາງໃດແດ່?

2. <u>**ຄອງຫາສິ່ງຕລອດໄປເປັນນິດ**:</u> (ປັນຍາຈານ 3:9-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 3:9-11
- ມີເຫດຜົນອັນໃດທີ່ຄົນທັງຫລາຍຕ້ອງການສິ່ງເຫລົ່ານີ້ໃຫ້ຄຸ້ມຄອງເຂົາເຈົ້າ?.
- ໃຫ້ນັກຮຽນບອກທາງທີ່ພຣະເຢຊູຍອມໃຫ້ພຣະອົງເອງເປັນຜູ້ທີ່ຢູ່ໃນເວລາດ້ວຍກັນກັບແຜ່ນດິນໂລກ, ຮ່າງການຝ່າຍເນື້ອໜັງໃນຖານະພຣະຄຣິດ.
- ຄວາມຈໍາກັດຂອງປະຈຸບັນ ແລະຝ່າຍເນື້ອໜັງ, ສິ່ງຂອງຕ່າງໆ ໃນໂລກ ໄດ້ຊ່ອຍທ່ານໃນເວລາທ່ານຄິດເຣື່ອງນິຣັນດອນ ແລະມັນເຮັດໃຫ້ທ່ານຢູ່ໃນຂອບເຂດນັ້ນຢ່າງໃດ?

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ**:</u> (ປັນຍາຈານ 3:9-11)

1. ການທີ່ທຳງານຢ່າງໜັກໜ່ວງນັ້ນລາວໄດ້ຫຍັງຈາກການຕໍ່ສູ້, ການແຂ່ງຂັນຂອງລາວ?
2. ແມ່ນຫຍັງທີ່ຄົນທຳງານໄດ້ຈາກການທຳງານທີ່ເປັນຄ່າຈ້າງຂອງເຂົາເຈົ້າ?
3. ໂດຍຄວາມຈຳກັດຂອງຊີວິດເຮັດແນວໃດພວກເຮົາຈຶ່ງຈະຮຽນຮູ້ໃນການເຊື່ອໄວ້ວາງໃຈພຣະເຈົ້າ?
4. ໃນການທີ່ວ່າ ໃຫ້ມີ ຫລືໃຫ້ເອົາສິ່ງທີ່ຕລອດໄປເປັນນິດເຂົ້າໃຈໃນຫົວໃຈໄວ້ນັ້ນໝາຍຄວາມວ່າແນວໃດ?

## 3 . <u>ຢືນຢູ່ໃນຣັສມີຂອງພຣະເຈົ້າ:</u> (ປັນຍາຈານ 3:12-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 3:12-14
- ຂໍໃຫ້ຂີດເສັ້ນນຶ່ງໃສ່ກະດານ ແລ້ວຂີດເສັ້ນລ່ອງລົງທາງກາງໃຫ້ຊຽນ "ກ" ໃສ່ຝ່າຍນຶ່ງ ແລະ "ຂ" ໃສ່ອີກຝ່າຍນຶ່ງ. ອະທິບາຍ ຊຶ່ງພຣະເຈົ້າໄດ້ຊົງຕ້ອງການໃຫ້ພວກເຮົາເຊີນເອົາພຣະອົງເຂົ້າມາໄດ້ທຸກໂອກາດ. ຈາກຈຸດ ກ ເຖິງຈຸກ ຂ ພວກເຮົາຈະໄປ ຫລືແມ່ນຫຍັງທີ່ພວກເຮົາຈະທຳກໍຕາມຕ້ອງມີການກຳນົດເວລາ, ພຣະເຈົ້າຕ້ອງການໃຫ້ພວກເຮົາຢືນຢູ່ໃນຄວາມເຄົາຣົບຢຳເກງພຣະອົງ ແລະຊົມຊື່ນຍິນດີໃນເວລາຂອງພວກເຮົາດ້ວຍກັນກັບພຣະອົງ.
- ທ່ານຈະເອົາຊີວິດຂອງທ່ານໄວ້ບ່ອນໃດ "ກ" ຫລື "ຂ" (ກ. ທາງຂອງເຮົາ. ຂ. ທາງຂອງພຣະເຈົ້າ)
- ທ່ານເຫັນການກຳນົດເວລາຂອງພຣະເຈົ້າທີ່ສະທ້ອນໃນຊີວິດຂອງທ່ານແນວໃດ?
- ໃນເວລາຂອງທ່ານທີ່ເຫລືອຢູ່ໃນໂລກນີ້ມີທາງໃດແດ່ທີ່ທ່ານສາມາດໃຫ້ມີຄວາມຊົມຊື່ນຍິນດີກັບສິ່ງອັນຕລອດໄປເປັນນິດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ຟີລິບປອຍ 2:9

1. ອີງຕາມ 1 ເປໂຕ 5:7, ເທິງຕາຊັ່ງຈາກ 1 ເຖິງ 10 ພຣະເຈົ້າໄດ້ຊົງຍົກທ່ານຂຶ້ນຫລາຍປານໃດ?
2. ແມ່ນຫຍັງທີ່ທ່ານໄດ້ເຮັດ ແລະຫລາຍປານໃດທີ່ທ່ານໄດ້ສັດທາໃນພຣະເຢຊູ?
3. ໃນຊີວິດປະຈຳວັນຂອງທ່ານນັ້ນຫລາຍປານໃດທີ່ທ່ານໄດ້ຍົກສູງ ແລະສັຣເສີນພຣະເຢຊູຄພຣະຜູ້ເປັນເຈົ້າ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 3:12-14)

1. ໃນທາງໃດແດ່ທີ່ທ່ານມີຄວາມຊື່ນຊົມຍິນດີກັບພຣະເຈົ້າ?
2. ໃນທາງໃດທີ່ທ່ານເຫັນຍາດພີ່ນ້ອງຂອງທ່ານຈະເຣີນຂຶ້ນໃນພຣະຄຣິດ ຫລືເມື່ອຍລ້າຕໍ່ການໃຊ້ເວລາກັບພຣະອົງ?
3. ທ່ານຈະໃຊ້ ຫລືລົງທຶນເວລາຂອງທ່ານໃນສິ່ງທີ່ນິຣັນທີ່ສຳແດງອອກນັ້ນຢ່າງໃດແດ່?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າຊົງໄດ້ປະທານໃຫ້ທຸກຄົນມີຄວາມສາມາດ ພິຈາຣະນາເບິ່ງສິ່ງນິຣັນດອນທັງຄວາມຈຳກັດຂອງມະນຸດ ທັງປົກປ້ອງເຂົາບໍ່ໃຫ້ມີຄວາມເຂົ້າໃຈໃນລັກສະນະທ່າທາງທັງໝົດໃນແຜນການຂອງພຣະເຈົ້າທີ່ກຳນົດການດຳຣົງຊີວິດຂອງເຂົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**